*Journal of Science and Teacher Education (JLSTE), 2*(2), 106-113
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

# ສຶກສາປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ສົກຮຽນ 2024-2025

*ດາວຽງ ເພັງລາວັນ**

*ມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ*

***ບົດຄັດຫຍໍ້***

ການສຶກສາຄັ້ງນີ້ມີຈຸດປະສົງເພື່ອສຶກສາປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມຊັ້ນ ມ. 1 ຂອງໂຮງຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ. ເຄື່ອງມືທີ່ໃຊ້ເກັບກຳຂໍ້ມູນແມ່ນແບບສອບຖາມ ເຊິ່ງເກັບກຳຂໍ້ມູນຈາກຄູສອນຈຳນວນ 20 ຄົນ, ຍິງ 10 ຄົນ ແລະ ນັກຮຽນຈຳນວນ 17 ຄົນ, ຍິງ 8 ຄົນ. ຜົນການຄົ້ນຄວ້າພົບວ່າ ປັດໄຈດ້ານສະພາບແວດລ້ອມ ແລະ ການຕິດຫຼິ້ນຂອງນັກຮຽນ (ເກມ,ໂທລະສັບ, ໝູ່ເພື່ອນບໍ່ດີ) ສົ່ງຜົນກະທົບຕໍ່ການອ່ານຫຼາຍທີ່ສຸດ. ນັກຮຽນຂາດຄວາມຮູ້ພື້ນຖານມາແຕ່ຊັ້ນອະນຸບານ, ປະຖົມສຶກສາ. ປັດໄຈການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງນັກຮຽນກໍ່ມີຜົນກະທົບຕໍ່ການອ່ານພາສາລາວຂອງພວກເຂົາ. ຜົນການຄົ້ນຄວ້ານີ້ແນະນຳໃຫ້ຄູສອນຕ້ອງໄດ້ຍົກລະດັບວິຊາສະເພາະຝຶກອົບຮົມວິທີການໃໝ່ ທັນກັບການສຶກສາໃນໄລຍະໃໝ່; ການຮຽນການສອນອ່ານຄູສອນຕ້ອງເສີມທັກສະການອ່ານໃຫ້ນັກຮຽນບໍ່ວ່າຈະເປັນທັກສະການອ່ານຕົວອັກສອນ, ການອອກສຽງ, ຄຳສັບ, ການອ່ານຫູ່ຽນໄຫຼ ແລະ ຄວາມເຂົ້າໃຈການອ່ານ. ການຮຽນການສອນອ່ານ ຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນຳຜູ້ຊ່ຽວຊານ ແລະ ສະຖາບັນອື່ນ. ນອກຈາກນັ້ນ ການຄົ້ນຄວ້ານີ້ຍັງແນະນຳໃຫ້ມີການປັບປຸງລະບຽບການຄຸ້ມຄອງນັກຮຽນສາມັນສຶກສາໃຫ້ມີການຮັດກຸມຂຶ້ນຕື່ມ ໂດຍໃຫ້ສອດຄ່ອງກັບຍຸກສະໄໝ ແລະ ເອກະພາບກັນທົ່ວປະເທດ.

**ຂໍ້ມູນບົດຄວາມ**

***ຄຳສັບສຳຄັນ:*** *ຄວາມສາມາດໃນການອ່ານພາສາລາວ, ຄວາມຍາກໃນການອ່ານ, ປັດໄຈດ້ານສະພາບແວດລ້ອມ, ນັກຮຽນຊັ້ນມັດທະຍົມຕົ້ນ, ການສະໜັບສະໜູນຂອງຜູ້ປົກຄອງ.*

**ຕິດຕໍ່ພົວພັນ: ດາວຽງ ເພັງລາວັນ; ໂທ: 020 95020522; 020 91016418*

*ອີເມວ: daviengpheng@gmail.com @gmail.com*

Received 5 April 2026
Received in revised form 22 April 2026
Accepted 16 May 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

*Phenglavan, 2026*
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

# Factors Affecting Lao Reading Difficulties among Students at the Demonstration Secondary School of Savannakhet Teacher Training College during the 2024–2025 Academic Year

*Davieng Phenglavan**

*Department of Lao Language and Literature, Savannakhet Teacher Training College*

## Abstract

This study aimed to investigate the factors affecting the inability of Grade 6 (Year 1 of lower secondary school) students to read the Lao language proficiently at the Demonstration Secondary School of Savannakhet Teacher Training College. The research instrument was a questionnaire administered to 20 teachers (10 females) and 17 students (8 females). The findings revealed that environmental factors and students' distractions, including excessive engagement with video games, mobile phones, and negative peer influence, had the greatest impact on students' Lao reading ability. In addition, many students lacked fundamental literacy skills acquired during preschool and primary education. Parental factors, particularly emotional support, encouragement, and regular monitoring of students' learning, were also found to significantly influence students' Lao reading achievement. Based on these findings, the study recommends that teachers enhance their professional competencies through continuous training in modern teaching approaches that are aligned with current educational reforms. In teaching reading, teachers should strengthen students' reading skills in all key areas, including letter recognition, pronunciation, vocabulary development, reading fluency, and reading comprehension. Furthermore, teachers should regularly engage in professional learning activities, such as sharing teaching experiences, reflecting on instructional practices, and collaborating with educational experts and other educational institutions. In addition, the study recommends strengthening the regulations and management systems for general education students to ensure more effective supervision and discipline. These regulations should be updated to reflect contemporary educational contexts while maintaining consistency and uniformity across the country.

***Keywords:*** *Lao Language reading ability, Reading difficulties, Environmental factors, Lower secondary school students, Parental support.*

**ARTICLE INFO**

**Correspondence: Davieng Phenglavan; Tel: +856 20* 95020522, *020 91016418; Email: daviengpheng@gmail.com*

Received 5 April 2026
Received in revised form 22 April 2026
Accepted 16 May 2026

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ເພື່ອປະຕິບັດຕາມແຜນພັດທະນາການສຶກສາໃນໄລຍະໃໝ່, ນຳເອົາຄວາມຮູ້ທາງດ້ານວິທະຍາສາດເຂົ້າໃນການຮຽນການສອນ; ການອ່ານພາສາລາວໄດ້ ຂອງນັກຮຽນຊັ້ນມັດທະຍົມ ຈຶ່ງຖືວ່າເປັນສິ່ງຈຳເປັນໃນການຄົ້ນຄວ້າຫາຄວາມຮູ້ໃຫ້ແກ່ນັກຮຽນໄດ້ເປັນຢ່າງດີ ເພາະວ່າການອ່ານ ແມ່ນການແປຄວາມໝາຍຈາກສັນຍະລັກ; ຄູ ນັກຮຽນຈະມີຄວາມຊຳນິຊຳນານ, ມີຄວາມຮູ້ຕ້ອງຜ່ານການອ່ານ ແລະ ອ່ານຕຳລາຕ່າງໆ ເປັນຕົ້ນແມ່ນໃນລາຍວິຊາຮຽນຕ່າງໆ ທີ່ມີການນຳໃຊ້ການອ່ານວິທີຕ່າງໆ ເຂົ້າໃນການຮຽນການສອນ ໃນການຄົ້ນຄວ້າ ບົດຮຽນປະເພດຕ່າງໆ ວ່າມີຄວາມໝາຍ, ເນື້ອໃນ, ຄວາມເຂົ້າໃຈໃຫ້ບັນລຸຕາມຈຸດປະສົງ.

ການອ່ານ ແມ່ນຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສື ຫຼື ຂໍ້ຄວາມທີ່ມີຜູ້ຂຽນໄວ້ ເຊິ່ງເລີ່ມຈາກການຮັບຮູ້ຄຳ. ການອອກສຽງ, ການຮູ້ຄວາມໝາຍຂອງຄຳ, ການເຂົ້າໃຈຄວາມໝາຍຕາມຕົວອັກສອນ, ການຕີຄວາມ ການປະສົມປະສານຄວາມຮູ້ທີ່ໄດ້ຈາກສິ່ງທີ່ອ່ານກັບປະສົບການເດີມ ແລະ ການນຳໄປໃຊ້ໃຫ້ເກີດປະໂຫຍດ (ພອນສີຣິ ອຸໄທວັນ, 2023)

ການອ່ານເປັນບັນຫາໜຶ່ງທີ່ມີຄວາມຈຳເປັນສຳລັບຄົນທົ່ວໄປເວົ້າລວມ, ເວົ້າສະເພາະແມ່ນນັກຮຽນ ນັກສຶກສາຫຍິ່ງມີຄວາມສຳຄັນຫຼາຍ ກ່ອນການສຳເລັດການສຶກສາ ນອກຈາກຟັງຄູ-ອາຈານ ອະທິບາຍເລື່ອງຕ່າງໆແລ້ວ ມັນຍັງຂຶ້ນກັບການຊອກຫາຂອງນັກຮຽນນຳອີກ ສຳລັບຄູກໍເຊັ່ນດຽວກັນຖ້າຢາກສິ່ງຄວາມຮູ້ໃຫ້ນັກຮຽນໄດ້ດີກໍຕ້ອງຊອກຮູ້, ຄົ້ນຄວ້າ ເອກະສານຕ່າງໆໃຫ້

*Journal of Science and Teacher Education (JLSTE), 2*(2), 106-113
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

ເລີກເຊິ່ງຈຶ່ງຈະສາມາດຖ່າຍທອດຄວາມຮູ້ໃຫ້ນັກຮຽນໄດ້ຕາມຈຸດປະສົງເປົ້າໝາຍຂອງຂະບວນການຮຽນການສອນ. (ສົມນະວົງ ມອນມະນີ, 2009)

ການອ່ານບົດຮຽນລາຍວິຊາຮຽນໃນການຮຽນການສອນ ຢູ່ໃນຫ້ອງໃຫ້ຖືກວິທີ ແມ່ນມາດຖານໜຶ່ງ, ສໍາລັບນັກຮຽນທີ່ຈະຕ້ອງໄດ້ຮຽນຮູ້ ເພື່ອນໍາໄປໃຊ້ເຂົ້າໃນການສອນໃຫ້ຖືກວິທີ ແລະໃຫ້ຮັບປະກັນຄຸນນະພາບໃນການຮຽນການສອນກ່ອນອື່ນໝົດນັກຮຽນຕ້ອງອ່ານໜັງສືໄດ້. ໂດຍປະຕິບັດຕາມຕາຕະລາງການຮຽນການສອນຢູ່ໃນຫຼັກສູດສາມັນສຶກສາ, ນັກຮຽນມັດທະຍົມຕ້ອງໄດ້ຮຽນຮູ້ຈາກການອ່ານຈາກພາສາລາວ, ເຊິ່ງໃນນັ້ນ ກໍລວມໄປເຖິງການອ່ານບົດຮຽນໃນລາຍວິຊາຕ່າງໆເຂົ້າໃນການຄົ້ນຄວ້າຢູ່ໃນຫ້ອງ ແລ້ວນໍາໄປໃຊ້ໃນການຮຽນຮູ້ໃນນອກໂຮງຮຽນ.

ຜ່ານການດໍາເນີນຫຼັກສູດການຮຽນການສອນໃນແຕ່ລະສົກຮຽນ ໂຮງຮຽນມັດທະຍົມສົມບູນສາທິດ ເຊິ່ງໄດ້ປະຕິບັດຕາມທິດຊີ້ນໍາຂອງກະຊວງສຶກສາທິການ ແລະ ກິລາ, ກົມສ້າງຄູ, ວິທະຍາໄລຄູສະຫວັນນະເຂດ ໃຫ້ໂຮງຮຽນມັດ ທະຍົມສົມບູນສາທິດ ປອດການກົກພາສາລາວ (ບໍ່ໃຫ້ມີຜູ້ອ່ານພາສາລາວບໍ່ໄດ້) ແຕ່ຄວາມເປັນຈິງແລ້ວ ໂດຍລວມໃນເຂດຕົວເມືອງ ແລະ ນອກຕົວເມືອງ ບັນຫານັກຮຽນມັດທະຍົມຍັງອ່ານພາສາລາວບໍ່ທັນໄດ້ຍັງມີຈໍານວນຫຼາຍ ແລະ ເປັ ເຊັ່ນນັກຮຽນຊັ້ນປະຖົມສຶກສາຂຶ້ນມາຊັ້ນມັດທະຍົມສຶກສາຍັງອ່ານພາສາລາວບໍ່ທັນໄດ້ແຕ່ລະສົກຮຽນເພີ່ມຂຶ້ນ. ເວົ້າສະ ເພາະໂຮງຮຽນມັດທະຍົມສົມບູນສາທິດ ໂດຍສະເພາະນັກຮຽນມັດທະຍົມຊັ້ນປີທີ 1 ຂອງແຕ່ລະສົກຮຽນ. ຜ່ານຂະ ບວນການສອບເສັງຄັດເລືອກເອົານັກຮຽນເຂົ້າຮຽນຊັ້ນມັດທະຍົມປີທີ 1; ຜ່ານຂະບວນການຮຽນການສອນຂອງຄູສອນແຕ່ລະລາຍວິຊາຮຽນ; ຜ່ານການຮຽນການສອນວິຊາພາສາລາວ-ວັນນະຄະດີ ແຕ່ລະສົກຮຽນ ແລະ ຜົນການປະເມີນ.

ດັ່ງນັ້ນ ຈຶ່ງເປັນສາເຫດທີ່ເຮັດໃຫ້ພວກຂ້າພະເຈົ້າມີຄວາມສົນໃຈຢາກສຶກສາ ແລະ ເຮັດການວິໄຈກ່ຽວກັບການອ່ານພາສາລາວບໍ່ທັນໄດ້ ຂອງນັກຮຽນມັດທະຍົມສາທິດ ຈໍານວນນີ້ເພື່ອຊອກຫາສາເຫດຂອງບັນຫາທີ່ຈະນໍາໄປສູ່ແນວທາງແກ້ໄຂບັນຫາໃນການຮຽນການສອນວິຊາພາສາລາວ-ວັນນະຄະດີ ແລະ ວິຊາຮຽນອື່ນໆຕາມຫຼັກສູດ. ໂດຍສະເພາະປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ໄປສູ່ການຮຽນການສອນທີ່ສອດຄ່ອງ ແລະ ເໝາະສົມ.

*1.2. ຄໍາຖາມຂອງການຄົ້ນຄ້ວາ*

1) ມີປັດໄຈໃດແດ່ທີ່ເປັນຜົນກະທົບຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນ ຊັ້ນປີທີ 1 ໂຮງຮຽນມັດທະຍົມສົມບູນສາທິດ?

2) ມີວິທີທາງແກ້ໄຂປັດໄຈ ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ຊັ້ນປີທີ 1 ແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

- ເພື່ອຊອກຫາປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ຊັ້ນປີທີ 1 ສົກຮຽນ 2024-2025.
- ເພື່ອຫາທາງແກ້ໄຂປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ຊັ້ນປີທີ 1 ສົກຮຽນ 2024-2025.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ສຸວະພັດ ແກ້ວກ້າ (2011)ໄດ້ສະເໜີວິທະຍານິພົນເລື່ອງ " ປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນວັດເມທັງກຣາວາສ (ເທດລັດຣາດຖະນຸກູນ) ການວິໄຈ" ໂດຍມີຈຸດປະສົງເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນວັດເມທັງກຣາວາສ (ເທດລັດຣາດຖະນຸກູນ/ປີການສຶກສາ 2552 ໂດຍຈໍາແນກປັດໄຈທີ່ສຶກສາເປັນ 3 ດ້ານ ຄືປັດໄຈສ່ວນຕົວ ໄດ້ແກ່ຜົນສໍາຜັດທາງການຮຽນ ບຸກຄະລິກກະພາບ ແລະ ນິໄສທາງການຮຽນ, ປັດໄຈດ້ານຄອບຄົວໄດ້ແກ່ ການເອົາໃຈໃສ່ທາງການຮຽນຂອງຜູ້ປົກຄອງ ແລະ ຖານະທາງເສດຖະກິດຂອງຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ໄດ້ແກ່ລັກສະນະທາງກາຍະພາບທາງການຮຽນ ສໍາພັນທະພາບລະຫວ່າງນັກຮຽນກັບຄູ ແລະ ສໍາພັນທະພາບລະຫວ່າງນັກຮຽນກັບເພື່ອນ.

ພາວິນີ ສຸທິພິເຊັດພັນ (2545, ໜ້າ 144) ພົບວ່ານັກສຶກສາພະຍາບານທີ່ມີສໍາພັນທະພາບລະຫວ່າງນັກສຶກສາກັບອາຈານຜູ້ສອນຕ່າງກັນ ມີການປັບຕົວແຕກຕ່າງກັນທຸກດ້ານຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ.05 ສະຫຼຸບໄດ້ວ່າປະຕິສໍາພັນທີ່ດີລະຫວ່າງນັກຮຽນກັບຄູມີສ່ວນຊ່ວຍໃຫ້ການຮຽນການສອນປະສົບຜົນສໍາເລັດ ດັ່ງນັ້ນ ຄູຈຶ່ງມີສ່ວນສໍາຄັນຫຼາຍຕໍ່ພຶດຕິກໍາການຮຽນຂອງນັກຮຽນ ກໍ່ຄືຖ້າຄູກັບນັກຮຽນມີສໍາພັນທະພາບທີ່ດີຕໍ່ກັນບັນຍາກາດການຮຽນການສອນຈະດີ ນັກຮຽນຈະມີພຶດຕິກໍາການຮຽນທີ່ເໝາະສົມ. ດາວຽງ ເພັງລາວັນ ແລະ ຈັນສະໝອນ ແກ້ວວິງກິດ (2011) ໄດ້ສຶກສາກ່ຽວກັບປັດໄຈທີ່ເປັນຜົນຕໍ່ການອ່ານຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 1 ລະບົບ 11+3, ສົກຮຽນ 2010-2011 ສາຍວິທະຍາສາດສັງຄົມ ພົບວ່ານັກສຶກສາໃນຫ້ອງທັງໝົດຢູ່ໃນເກນອ່ອນຫຼາຍ ຫາ ປານກາງ.

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

ບ່ອນທີ່ມີບັນຫາມີຫຼາຍສຸດແມ່ນບົດເລື່ອງວັນນະຄະດີລາວ ມີບັນຫາຈາກການຄົ້ນຄວ້າຫາຢູ່ໃນອິນເຕີເນັດ (Internet) ມີ 100%; ມີບັນຫາຈາກບົດເລື່ອງວັນນະຄະດີລາວ ບໍ່ໄດ້ຈັດພິມຂຶ້ນໃໝ່ ແລະມີບົດເລື່ອງວັນນະຄະດີລາວ ທີ່ນຳມາຮຽນຍັງເປັນເລື່ອງດັ້ງເດີມບໍ່ໄດ້ປະຍຸກ ບໍ່ໄດ້ນຳໄປສະແດງເປັນຮູບເງົາວິດີໂອ, ສະແດງລະ ຄອນ ແລະ ສະແດງເທີງເວທີ ມີ 93.75%; ແລະບັນຫາອື່ນໆຕາມໄດ້ສະຫຼຸບໄວ້ໃນບົດວິໄຈ. ກຸ່ມວິໄຈຈຶ່ງໄດ້ນຳມາເປັນແນວທາງໃນການແກ້ໄຂບັນຫາເຮັດໃຫ້ນັກສຶກສາຫັນມາສົນໃຈ ການອ່ານບົດເລື່ອງວັນນະຄະດີລາວ. ເຫັນວ່າ ຜົນການປະເມີນຫຼັງຂອງນັກສຶກສາດັ່ງນີ້: ນັກສຶກສາທີ່ປະເມີນໄດ້ເກນອ່ອນຫຼາຍ ແມ່ນສູນ; ນັກສຶກສາທີ່ປະເມີນໄດ້ເກນອ່ອນ ມີ 3 ຄົນ, ເທົ່າກັບ 9.37%; ນັກສຶກສາທີ່ປະເມີນໄດ້ເກນປານກາງ ມີ 7 ຄົນ, ເທົ່າກັບ 21.87%; ນັກສຶກສາທີ່ປະເມີນໄດ້ເກນດີມີ 13 ຄົນ, ເທົ່າກັບ 40.62%; ແລະດີຫຼາຍມີ 9 ຄົນເທົ່າກັບ 28.1′2%; ເຫັນໄດ້ວ່າ ນັກສຶກສາໃນຫ້ອງທັງໝົ”ດ ຢູ່ໃນເກນອ່ອນ ຫາ ດີຫຼາຍ.

## 3. ວິທີດຳເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

*3.1.1 ປະຊາກອນ*

ປະຊາກອນນັກວິໄຈໄດ້ເລືອກເອົາຄູ ອາຈານ ໂຮງຮຽນມັດທະຍົມສົມບູນສາທິດທັງໝົດຈຳນວນ 22 ຄົນ, ຍິງ 11 ຄົນ ແລະ ນັກຮຽນຊັ້ນ ມ. 1 ທັງໝົດຈຳນວນ 101 ຄົນ, ຍິງ 46 ຄົນ ສົກຮຽນ 20224-2025 ເປັນປະຊາກອນການວິໄຈ.

*3.1.2 ກຸ່ມຕົວຢ່າງ*

ການສຶກສາຄັ້ງນີ້ ນັກວິໄຈໄດ້ເລືອກເອົາຄູ ອາຈານ ໂຮງຮຽນມັດທະຍົມສົມບູນສາທິດທັງໝົດຈຳນວນ 20 ຄົນ ຍິງ 10 ຄົນ ແລະນັກຮຽນຊັ້ນ ມ. 1 ຈຳນວນ 17 ຄົນ, ຍິງ 8 ຄົນ ສາເຫດທີ່ເລືອກເອົານັກຮຽນທີ່ອ່ານພາສາລາວບໍ່ທັນໄດ້ນີ້ເປັນກຸ່ມຕົວຢ່າງສຳລັບການວິໄຈ ກໍຍ້ອນວ່ານັກຮຽນດັ່ງກ່າວໄດ້ກະທົບຕໍ່ມາດຖານຂອງໂຮງຮຽນມັດທະຍົມສາທິດ (ໃຫ້ປອດນັກຮຽນອ່ານພາສາລາວບໍ່ໄດ້) ມາດຳເນີນການວິໄຈ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ໃນການສຶກສາຄັ້ງນີ້ຜູ້ວິໄຈໄດ້ໃຊ້ວິທີການສັງເກດ, ໃຊ້ແບບສອບຖາມ ສັງລວມຄວາມຄິດເຫັນຂອງຄູອາຈານໃນໂຮງຮຽນ ມັດທະຍົມສົມບູນສາທິດ ແລະ ແບບປະເມີນນັກຮຽນໃນຫ້ອງເປົ້າໝາຍ (ຊັ້ນ ມ. 1 ທັງໝົດ).

ການສ້າງເຄື່ອງມືຄະນະຜູ້ສຶກສາໄດ້ດຳເນີນການສ້າງເຄື່ອງມືຕາມຂັ້ນຕອນດັ່ງນີ້:

ສຶກສາເອກະສານ ແລະ ລາຍງານວິໄຈທີ່ກ່ຽວຂ້ອງມາເປັນແນວທາງ. ສຶກສາສະພາບການຮຽນການສອນຂອງນັກຮຽນໃນຊັ້ນ ມ. 1. ມັດທະຍົມສົມບູນສາທິດໃນໄລຍະລົງສອນຕົວຈິງເພື່ອນຳມາເປັນແນວທາງ.

- ການສ້າງແບບສອບຖາມສະແດງຄວາມຄິດເຫັນ ແມ່ນດຳເນີນເອົາຕາມສະພາບການຮຽນການສອນ ໃນລາຍວິຊາ ແລະ ຄູສອນທັງໝົດ. ແບບສອບຖາມເພື່ອການວິໄຈ ສະບັບນີ້ໄດ້ສ້າງຂຶ້ນໂດຍມີຈຸດປະສົງເພື່ອສຶກສາປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ຂໍຄວາມຄິດເຫັນຄູ ອາຈານ ສອນໃນມັດທະຍົມສົມບູນສາທິດ. ແບບສອບຖາມມີຄຳຖາມຈຳນວນ 21 ຂໍ້ ທຸກຂໍ້ຈະມີຂໍ້ມູນຈະຕ້ອງຕອບຢູ່ 1 ສະພາບຄືຕາມປັດໄຈທີ່ເປັນຈິງຜູ້ວິໄຈມີຄວາມຕ້ອງການຢາກສຶກສາປັດໄຈທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ໃນ 4 ດ້ານ ດັ່ງນີ້: 1) ປັດໄຈທົ່ວໄປ, 2) ປັດໄຈຕໍ່ນັກຮຽນ, 3) ປັດໄຈຕໍ່ຄູສອນ, 4) ຄຳຄິດເຫັນອື່ນໆ ຄຳຕອບຂອງທ່ານຈະເກັບໄວ້ເປັນຄວາມລັບສຳລັບຜົນການວິໄຈຈະສະເໜີໃນພາບລວມ ໂດຍຈະບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ທ່ານ ແລະ ໜ່ວຍງານຂອງທ່ານແຕ່ປະການໃດ. ແບບສອບຖາມສະບັບນີ້ ແບ່ງອອກເປັນ 2 ຕອນດັ່ງນີ້:

ຕອນທີ 1: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ເປັນແບບສອບຖາມ ທີ່ມີລັກສະນະກວດສອບລາຍການ(Checklist) ມີຈຳນວນ 4 ຂໍ້ ໄດ້ແກ່ເພດ ອາຍຸການໃນການສອນ ວຸດທິການສຶກສາ ແລະ ຕຳແໜ່ງທາງວິຊາການ (ວິທະຍາຖານະ).

ຕອນທີ 2: ຄວາມຄິດເຫັນກ່ຽວກັບຄວາມຕ້ອງການ ແລະຈຳເປັນໃນການຮຽນການສອນທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ຕາມປັດໄຈທີ່ເປັນຈິງ ມີລັກສະນະເປັນມາດຕະສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບ ຄື ມີຄວາມຕ້ອງການຈຳເປັນໃນການຮຽນການສອນ ຕາມປັດໄຈທີ່ເປັນຈິງດັ່ງນີ້: ໜ້ອຍສຸດ, ໜ້ອຍ, ປານກາງ, ຫຼາຍ, ຫຼາຍທີ່ສຸດ.

*3.3 ວິທີເກັບກຳຂໍ້ມູນ*

ໃນການດຳເນີນການວິໄຈຄັ້ງນີ້ ຜົນການປະເມີນນັກຮຽນຈາກການສອບເສັງຄັດເລືອກເຂົ້າຮຽນຊັ້ນ ມ. 1 ສົກຮຽນ 2024-2025; ການປະເມີນຈາກກິດຈະກຳການຮຽນການສອນພາສາລາວ ແລະ ວິຊາອື່ນໆ ຜ່ານການປະເມີນຜົນ ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນ ດັ່ງນີ້: ນັກຮຽນທີ່ປະເມີນໄດ້ເກນອ່ານບໍ່ໄດ້ ມີຈຳນວນ 14 ຄົນ, ເທົ່າກັບ 82.35%; ນັກຮຽນທີ່ປະເມີນໄດ້ເກນອ່ານໄດ້ລະດັບອ່ອນ ມີຈຳນວນ 3 ຄົນ, ເທົ່າກັບ 17.64%; ນັກຮຽນທີ່ປະເມີນໄດ້ເກນປານກາງ, ເກນດີ, ດີຫຼາຍ ມີຈຳນວນ o ຄົນ, ເທົ່າກັບ 0%. ເຫັນໄດ້ວ່າ ນັກຮຽນທັງໝົດ ຢູ່ໃນເກນ ອ່ານບໍ່ໄດ້ ຫາ ອ່ານໄດ້ລະດັບອ່ອນ ມີຈຳນວນມ 17 ຄົນ, ເທົ່າກັບ 100%. ຖ້າທຽບໃສ່ນັກຮຽນຊັ້ນ ມ. 1 ທັງໝົດ ຈຳນວນ 101

*Journal of Science and Teacher Education (JLSTE), 2*(2), 106-113
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

ຄົນ, ເທົ່າກັບ 16.83% ຖືວ່າເປັນເປີເຊັນທີ່ສູງກັບໂຮງຮຽນມັດທະຍົມສາທິດປອດນັກຮຽນກຶກພາສາລາວ.

*3.4 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ*

ຈາກການສັງເກດ, ການປະເມີນ, ແບບສອບຖາມການສຳຫຼວດຄວາມຄິດ ຄຳເຫັນຂອງນັກສຶກສາໃນການຮຽນການສອນໃນກຸ່ມເປົ້າໝາຍສາມາດຕີລາຄາ ພຶດຕິກຳບັນຫາໃນການອ່ານພາສາລາວໃນວິຊາຮຽນ ແລະ ພາສາລາວ ຂອງນັກຮຽນ ດັ່ງນີ້:

- ສູດຄິດໄລ່ ການປະເມີນ ສຳລັບວິເຄາະຂໍ້ມູນດັ່ງນີ້:
  $P = \frac{f \times 100}{n}$
  $P =$ ເປີເຊັນ
  $f =$ ຈຳນວນຜົນການປະເມີນນັກສຶກສາ
  $n =$ ຈຳນວນນັກສຶກສາທັງໝົດທີ່ປະເມີນ

*3.5 ການວິເຄາະຂໍ້ມູນ*

ຜູ້ວິໄຈວິເຄາະຂໍ້ມູນໂດຍການເອົາແບບສອບຖາມມາພິມຂໍ້ມູນເຂົ້າໂປຣແກຣມ Microsoft Office Excel ຈາກນັ້ນກໍຊອກຫາເປີເຊັນ ຈາກນັ້ນກໍຕີຄວາມໝາຍຈາກເປີເຊັນດັ່ງກ່າວ. ບົດຄົ້ນຄວ້ານີ້ບໍ່ໄດ້ຄິດໄລ່ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານແຕ່ຢ່າງໃດ.

**4. ຜົນການຄົ້ນຄວ້າ**

*4.1 ຜົນການປະເມີນຂອງນັກຮຽນ*

ຈາກຕາຕະລາງທີ 2 ເຫັນວ່າ ຜົນການປະເມີນລະດັບຄວາມສາມາດໃນການອ່ານຂອງນັກຮຽນພົບວ່ານັກຮຽນທີ່ຢູ່ໃນເກນອ່ານບໍ່ໄດ້ມີຈຳນວນ 14 ຄົນ ເຊິ່ງເທົ່າກັບ 82.35%. ນັກຮຽນທີ່ປະເມີນໄດ້ເກນອ່ານໄດ້ລະດັບອ່ອນມີຈຳນວນ 3 ຄົນເຊິ່ງເທົ່າກັບ 17.64%. ນັກຮຽນທີ່ປະເມີນໄດ້ເກນປານກາງ, ເກນດີ ແລະ ດີຫຼາຍແມ່ນບໍ່ມີ. ເຫັນໄດ້ວ່ານັກຮຽນທັງໝົດຢູ່ໃນເກນອ່ານບໍ່ໄດ້ຫາອ່ານໄດ້ລະດັບອ່ອນມີຈຳນວນມ 17 ຄົນ ເຊິ່ງເທົ່າກັບ 100%. ຖ້າທຽບໃສ່ນັກຮຽນຊັ້ນ ມ. 1 ທັງໝົດ ຈຳນວນ 101 ຄົນ, ເທົ່າກັບ 16.83% ຖືວ່າເປັນເປີເຊັນທີ່ສູງກັບໂຮງຮຽນມັດທະຍົມສາທິດປອດນັກຮຽນກຶກພາສາລາວ.

ຕາຕະລາງທີ 2: ສະຫຼຸບຜົນການປະເມີນ

| ລ/ດ | ເກນຄະແນນ | ຄະແນນ | ຈຳນວນຄົນ | ຄິດເປັນເປີເຊັນ % | ທຽບໃສ່ນັກຮຽນຊັ້ນ ມ.1 |
|---|---|---|---|---|---|
| 1 | ອ່ານບໍ່ໄດ້ | 1 | 14 | 82,35 | 13,86 |
| 2 | ອ່ານໄດ້ ລະ ດັບ ອ່ອນ | 2 | 3 | 17,64 | 2,97 |
| 3 | ອ່ານໄດ້ ລະ ດັບ ກາງ | 3 | 0 | 0 | 0 |
| 4 | ອ່ານໄດ້ ຫຼາຍ | 4 | 0 | 0 | 0 |
| 5 | ອ່ານໄດ້ ຫຼ່ຽນໄຫຼ | 5 | 0 | 0 | 0 |
| **ລວມ** | | | **17** | **100** | **16,83** |

*4.2 ປັດໄຈທີ່ມີຜົນກະທົບຕໍ່ການອ່ານບໍ່ໄດ້ຂອງນັກຮຽນ*

ຜົນການວິເຄາະຂໍ້ມູນພົບວ່າ ສະພາບແວດລ້ອມເປັນເປັດໄຈກະທົບຕໍ່ການຮຽນການສອນການອ່ານ (ສິ່ງຫຍໍ້ທໍ້ຕ່າງໆເຊັ່ນ: ເກມ, ໂທລະສັບ, ຫຼິ້ນ, ໝູ່ເພື່ອນ, ສິ່ງເສບຕິດ...) ຈຳນວນທີ່ແມ່ນຫຼາຍທີ່ສຸດ ມີ 20 ຄົນ, ຄິດເປັນເປີເຊັນ 100%; ເຫັນໄດ້ວ່າການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ, ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງລູກຫຼານນັກຮຽນ ແມ່ນຫຼາຍທີ່ສຸດ ມີ 18 ຄົນ, ຄິດເປັນເປີເຊັນ 90% (ເບິ່ງພາກເພີ່ມເຕີມ).

ສຳລັບປັດໄຈຕໍ່ນັກຮຽນ ເຫັນໄດ້ວ່າຈາກການຕິດຫຼິ້ນຂອງນັກຮຽນ (ເກມ, ໂທລະສັບ, ໝູ່ເພື່ອນບໍ່ດີ...) ຈຳນວນທີ່ແມ່ນຫຼາຍສຸດ ມີ 20 ຄົນ, ຄິດເປັນເປີເຊັນ 100%. ປັດໄຈຖັດມາແມ່ນນັກຮຽນຂາດຄວາມຮູ້ພື້ນຖານມາແຕ່ຊັ້ນອະນຸບານ ແລະ ປະຖົມສຶກສາເຊິ່ງມີ 19 ຄົນ ກວມເອົາ 95% ຂອງຜູ້ຕອບແບບສອບຖາມ.

ສຳລັບປັດໄຈຕໍ່ຄູເຫັນໄດ້ວ່າການຮຽນການສອນອ່ານຄູສອນຕ້ອງໄດ້ຍົກລະດັບວິຊາສະເພາະຝຶກອົບຮົມວິທີການໃໝ່ທັນກັບການສຶກສາໃນໄລຍະໃໝ່; ການຮຽນການສອນອ່ານຄູສອນຕ້ອງເສີມທັກສະການອ່ານໃຫ້ນັກຮຽນ (ທັກສະຕົວອັກສອນ , ການອອກສຽງ, ຄຳສັບ, ການອ່ານຫຼ່ຽນໄຫຼ ແລະ ຄວາມເຂົ້າໃຈການອ່ານ); ການຮຽນການສອນອ່ານ ຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນຳຜູ້ຊ່ຽວຊານ ແລະ ສະຖາບັນອື່ນ. ຈຳນວນທີ່ແມ່ນຫຼາຍທີ່ສຸດ ມີ 19 ຄົນ, ຄິດເປັນເປີເຊັນ 95%;

ນອກຈາກນັ້ນແລ້ວຍັງມີປັດໄຈດ້ານອື່ນໆອີກ ໂດຍສະເພາະແມ່ນການປັບປຸງລະບຽບການຄຸ້ມຄ່ອງນັກຮຽນ

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

ສາມັນສຶກສາ ມີການຮັດກຸມສອດຄ່ອງກັບຍຸກສະໄໝແລະ ເອກະພາບກັນທົ່ວປະເທດ ເຊິ່ງມີຄຳຄິດເຫັນກວມເອົາ 35%.

*4.3 ແນວທາງແກ້ໄຂປັດໄຈທີ່ສົ່ງຜົນຕໍ່ການອ່ານຂອງນັກຮຽນ*

ເພື່ອແກ້ໄຂສະພາບແວດລ້ອມທີ່ເປັນປັດໄຈກະທົບຕໍ່ການຮຽນການສອນການອ່ານ (ສິ່ງຫຍໍ້ທໍ້ຕ່າງໆເຊັ່ນ: ເກມ, ໂທລະສັບ, ຫຼິ້ນ, ໝູ່ເພື່ອນ, ສິ່ງເສບຕິດ...) ຄູ ແລະ ຊຸມຊົນຄວນຈັດສະພາບແວດລ້ອມທີ່ດີທັງໃນ ແລະ ນອກຫ້ອງຮຽນເພື່ອໃຫ້ນັກຮຽນປ່ຽນແປງພຶດຕິກຳດີຂຶ້ນ. ການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ, ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງລູກຫຼານນັກຮຽນ ກໍຄວນໃຫ້ເອົາໃຈໃສ່ຢ່າງເປັນປົກກະຕິ (90%) ເພື່ອໃຫ້ມີຄວາມອົບອຸ່ນໃຈ ນັກຮຽນຈະບໍ່ຄິດວ່າຕົນເອງຢູ່ໂດດດ່ຽວ. ພາກສ່ວນສັງຄົມກໍ່ຄວນໃຫ້ຄວາມຮ່ວມມືໃນການໄປມາ ເພື່ອໃຫ້ເຂົາຮູ້ສຶກວ່າເຂົາມີຄວາມປອດໄພ. ເມື່ອນັ້ນ ນັກຮຽນເອງ ເຂົາຈະໄດ້ປັບປຸງຕົນເອງ ອອກຈາກການຕິດຫຼິ້ນຂອງນັກຮຽນ (ເກມ, ໂທລະສັບ, ໝູ່ເພື່ອນບໍ່ດີ...).

ສຳລັບປັດໄຈນັກຮຽນຂາດຄວາມຮູ້ພື້ນຖານມາແຕ່ຊັ້ນອະນຸບານ, ປະຖົມສຶກສາ ພາກສ່ວນຄູກໍ່ຕ້ອງມີຈັນຍາບັນຮັກແພງ, ຊຸກຍູ້ສົ່ງເສີມ ຊ່ວຍເຫຼືອນັກຮຽນ ຄວນມີການສອນໃຫ້ຮັກໃນການອ່ານ. ນອກຈາກນັ້ນ ອາຈານເຫັນໄດ້ວ່າ ການຮຽນການສອນອ່ານ ຄູສອນຕ້ອງໄດ້ຍົກລະດັບວິຊາສະເພາະຝຶກອົບຮົມວິທີການໃໝ່ ທັນກັບການສຶກສາໃນໄລຍະໃໝ່.

## 5.ອະພິປາຍຜົນ

ຈາກຜົນການຄົ້ນຄວ້າເຫັນໄດ້ວ່າປັດໄຈດ້ານສະພາບແວດລ້ອມມີຜົນກະທົບຕໍ່ການຮຽນການສອນການອ່ານຫຼາຍທີ່ສຸດ. ການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ, ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງລູກຫຼານນັກຮຽນກໍມີຄວາມສຳຄັນເຊັ່ນກັນ ເຊິ່ງສອດຄ່ອງກັບທິດສະດີຂອງ ສຸວະພັດ ແກ້ວກ້າ (2011) ທີ່ຈຳແນກປັດໄຈທີ່ສຶກສາເປັນ 3 ດ້ານ ຄືປັດໄຈສ່ວນຕົວ ໄດ້ແກ່ຜົນສຳຜັດທາງການຮຽນ ບຸກຄະລິກກະພາບ ແລະ ນິໄສທາງການຮຽນ, ປັດໄຈດ້ານຄອບຄົວ ໄດ້ແກ່ ການເອົາໃຈໃສ່ທາງການຮຽນຂອງຜູ້ປົກຄອງ ແລະ ຖານະທາງເສດຖະກິດຂອງຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ໄດ້ແກ່ລັກສະນະທາງກາຍະພາບທາງການຮຽນ ສຳພັນທະພາບລະຫວ່າງນັກຮຽນກັບຄູ ແລະ ສຳພັນທະພາບລະຫວ່າງນັກຮຽນກັບເພື່ອນ. ໃນດ້ານການສອນອ່ານຂອງຄູ ເຫັນໄດ້ວ່າການຮຽນການສອນອ່ານ ຄູສອນຕ້ອງໄດ້ຍົກລະດັບວິຊາສະເພາະຝຶກອົບຮົມວິທີການໃໝ່ ທັນກັບການສຶກສາໃນໄລຍະໃໝ່. ການຮຽນການສອນອ່ານຄູສອນຕ້ອງເສີມທັກສະການອ່ານໃຫ້ນັກຮຽນ (ທັກສະຕົວອັກສອນ, ການອອກສຽງ, ຄຳສັບ, ການອ່ານຫຼູ່ຣູນໄຫຼ ແລະ ຄວາມເຂົ້າໃຈການອ່ານ); ການຮຽນການສອນອ່ານ ຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນຳຜູ້ຊ່ຽວຊານ ແລະ ສະຖາບັນອື່ນ ເຊິ່ງສອດຄ່ອງກັບທິດສະດີຂອງ ພາວິນີ ສຸທິພິເຊັດພັນ (2545, ໜ້າ 144) ທີ່ພົບວ່າ ນັກສຶກສາພະຍາບານທີ່ມີສຳພັນທະພາບລະຫວ່າງນັກສຶກສາກັບອາຈານຜູ້ສອນຕ່າງກັນ ມີການປັບຕົວແຕກຕ່າງກັນທຸກດ້ານຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ.05 ສະຫຼຸບໄດ້ວ່າປະຕິສຳພັນທີ່ດີລະຫວ່າງນັກຮຽນກັບຄູມີສ່ວນຊ່ວຍໃຫ້ການຮຽນການສອນປະສົບຜົນສຳເລັດ ດັ່ງນັ້ນ ຄູຈຶ່ງມີສ່ວນສຳຄັນຫຼາຍຕໍ່ພຶດຕິກຳການຮຽນຂອງນັກຮຽນ ກໍ່ຄືຖ້າຄູກັບນັກຮຽນມີສຳພັນທະພາບທີ່ດີຕໍ່ກັນບັນຍາກາດການຮຽນການສອນຈະດີ ນັກຮຽນຈະມີພຶດຕິກຳການຮຽນທີ່ເໝາະສົມ. ຜູ້ສຶກສາວິໄຈຈຶ່ງໄດ້ນຳມາເປັນແນວທາງໃນການແກ້ໄຂບັນຫາທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ.

ເພື່ອເຮັດໃຫ້ສະພາບການຮຽນການສອນດີຂຶ້ນ ພາກສ່ວນສັງຄົມ ແລະ ຜູ້ປົກຄອງຕ້ອງໄດ້ຊ່ວຍກັນແກ້ໄຂບັນຫາທີ່ເປັນຜົນຕໍ່ການອ່ານພາສາລາວບໍ່ທັນໄດ້ຂອງນັກຮຽນ. ການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ, ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງລູກຫຼານນັກຮຽນຈະມີຜົນເຮັດໃຫ້ການຮຽນດີຂຶ້ນ. ພາກສ່ວນນັກຮຽນເອງກໍຕ້ອງໄດ້ປັບປຸງຕົນເອງອອກຈາກສິ່ງບໍ່ດີດັ່ງກ່າວ. ພາກສ່ວນຄູອາຈານເອງກໍຕ້ອງໄດ້ຍົກລະດັບວິຊາສະເພາະຝຶກອົບຮົມວິທີການໃໝ່ ທັນກັບການສຶກສາໃນໄລຍະໃໝ່. ການຮຽນການສອນອ່ານຄູສອນຕ້ອງເສີມທັກສະການອ່ານໃຫ້ນັກຮຽນ (ທັກສະຕົວອັກສອນການອອກສຽງ, ຄຳສັບ, ການອ່ານຫຼູ່ຣູນໄຫຼ ແລະ ຄວາມເຂົ້າໃຈການອ່ານ). ການຮຽນການສອນອ່ານ ຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນຳຜູ້ຊ່ຽວຊານ ແລະ ສະຖາບັນອື່ນຕື່ມ. ເພື່ອປູກຈິດສຳນຶກເຮັດໃຫ້ນັກຮຽນຮັກມັກການອ່ານ ການຄົ້ນຄວ້ານີ້ແນະນຳໃຫ້ມີການປັບປຸງລະບຽບການຄຸ້ມຄອງນັກຮຽນສາມັນສຶກສາໃຫ້ມີການຮັດກຸມຂຶ້ນຕື່ມ ແລະ ສອດຄ່ອງກັບຍຸກສະໄໝ ແລະ ເອກະພາບກັນທົ່ວປະເທດ.

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

## 6. ສະຫຼຸບຜົນ

ການວິໄຈຄັ້ງນີ້ມີຈຸດປະສົງຄື ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນອ່ານພາສາລາວ ໃນວິຊາພາສາລາວຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນມັດທະຍົມສາທິດວິທະຍາໄລຄູສະຫວັນນະເຂດ. ຈາກຜົນການຄົ້ນຄວ້າ ສາມາດສະຫຼຸບໄດ້ວ່າ ສະພາບແວດລ້ອມເປັນເປັດໄຈຫຼັກທີ່ກະທົບຕໍ່ການຮຽນການສອນການອ່ານ. ປັດໄຈຕໍ່ມາແມ່ນການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ, ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງນັກຮຽນ. ນອກຈາກນັ້ນການຂາດຄວາມຮູ້ພື້ນຖານຂອງນັກຮຽນແຕ່ຊັ້ນອະນຸບານ ແລະ ປະຖົມສຶກສາກໍສົ່ງຜົນກະທົບໂດຍກົງຕໍ່ການອ່ານຂອງນັກຮຽນ. ໃນດ້ານຄູສອນກໍພົບວ່າ ຄູຍັງມີຄວາມຕ້ອງການຍົກລະດັບວິຊາສະເພາະໃຫ້ສູງຂຶ້ນ. ຍັງມີຄວາມຕ້ອງການຝຶກອົບຮົມວິທີການໃໝ່ທັນກັບການສຶກສາໃນໄລຍະໃໝ່ຕື່ມອີກ. ພ້ອມນັ້ນ ການຮຽນການສອນອ່ານຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນໍາຜູ້ຊ່ຽວຊານ ແລະ ສະຖາບັນອື່ນ.

ເພື່ອຫຼຸດຜ່ອນບັນຫາດັ່ງກ່າວ ຄູ ແລະ ຊຸມຊົນຄວນຈັດສະພາບແວດລ້ອມທີ່ດີທັງໃນ ແລະ ນອກຫ້ອງຮຽນ. ການໃຫ້ຄວາມອົບອຸ່ນ, ການຊຸກຍູ້ສະໜັບສະໜູນ ແລະ ຕິດຕາມຈາກຜູ້ປົກຄອງຢ່າງໃກ້ຊິດ ຈະສົ່ງຜົນດີຕໍ່ການຄົ້ນຄວ້າຮໍ່າຮຽນຂອງນັກຮຽນ. ພາກສ່ວນສັງຄົມກໍ່ຄວນໃຫ້ຄວາມຮ່ວມມືໃນການໄປມາ ແລະ ເປັນແບບຢ່າງທີ່ດີໃຫ້ກັບນັກຮຽນ.

## 7. ຂໍ້ສະເໜີແນະສໍາລັບຜູ້ປະຕິບັດ

1) ການສອນອ່ານພາສາລາວຄູຄວນດໍາເນີນໄປຕາມຫຼັກການ, ວິທີ ແລະ ຂັ້ນຕອນ.

2) ຄູຜູ້ສອນອ່ານພາສາລາວຕ້ອງໄດ້ເຊື່ອມໂຍງຄວາມຮູ້ໃໝ່ ແລະ ຄວາມຮູ້ເກົ່າໃຫ້ແກ່ນັກຮຽນເປັນຕົ້ນ: ດ້ານການອ່ານຄໍາສັບ, ອ່ານປະໂຫຍກ, ການບົດເລື່ອງ.

3) ການສອນອ່ານພາສາລາວຄູສອນຕ້ອງມີວິທີສອນ ແລະ ກິດຈະກໍາການສອນທີ່ຫຼາກຫຼາຍ ເພື່ອໃຫ້ນັກຮຽນໄດ້ຮຽນຮູ້ການອອກສຽງທີ່ຖືກຕ້ອງຕາມວິທີ.

4) ສາລັບບົດຄົ້ນຄວ້າໃນຕໍ່ໜ້າ ຄວນລົງເລິກການສໍາພາດ ຫຼື ການໃຫ້ນັກຮຽນສະແດງຄວາມຄິດເຫັນ ຕໍ່ກັບປັດໄຈຕ່າງໆ ຫຼື ອາດປຽບທຽບປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ມີຕໍ່ການຮຽນວິຊາພາສາລາວກັບວິຊາອື່ນໆ ເພື່ອທີ່ຈະເກັບກໍາຂໍ້ມູນເພື່ອເປັນປະໂຫຍດໃນການພັດທະນາການຮຽນ-ການສອນຕໍ່ໄປ

## 8. ຂໍ້ຈໍາກັດຂອງການຄົ້ນຄ້ວາ

1) ເນື່ອງຈາກວ່າການສຶກສາປັດໄຈທີ່ສົ່ງຜົນຕໍ່ການອ່ານພາສາລາວໃນພາສາລາວ ແມ່ນການສຶກສາແບບປະລິມານ ໂດຍໃຊ້ການອະທິບາຍ ວິເຄາະ ແລະ ຍົກຕົວຢ່າງມາປະກອບເປັນການສຶກສາທີ່ຕ້ອງການຜົນໄດ້ຮັບເປັນເນື້ອໃນໃຈຄວາມ ຈຶ່ງມີຂໍ້ຈໍາກັດທາງດ້ານເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງ ທີ່ເປັນພາສາລາວຍັງບໍ່ຫຼາຍ.

2) ໃນການສຶກສາຜ່ານມາຫົວຂໍ້ນີ້ຍັງບໍ່ມີຜູ້ຂຽນຫຼາຍ ໂດຍສະເພາະບົດຄົ້ນຄວ້າພາຍໃນປະເທດ ຈຶ່ງເຮັດໃຫ້ການຊອກຫາຂໍ້ມູນຈໍາກັດ.

## ໑. ເອກະສານອ້າງອີງ

ສິນນະວົງ ມອນມະນີ ພ້ອມຄະນະ. (2009). *ປຶ້ມຫຼັກການສອນມັດທະຍົມຕົ້ນ 2, ສາຍສ້າງຄູມັດທະຍົມຕົ້ນ, ລະບົບ 11+3, ປີທີ 2, ກົມສ້າງຄູ, ກະຊວງສຶກສາທິການ.* ະຄອນຫຼວງວຽງຈັນ ພິມທີ່ Nhan Dan Printing House HCMC.

ເອກະສານ *ການວິໄຈພາກປະຕິບັດ ສໍາລັບນັກສຶກສາລາວ ເອກະສານ ການຮຽນການສອນ, ກົມສ້າງຄູ, ກະຊວງສຶກສາທິການ*, ວຽງຈັນ, ສ ປ ປ ລາວ 13 ທັນວາ 2002.

ວັນນະສຸກ ໂຄດໄຊ ພ້ອມຄະນະ. (2008). *ປຶ້ມວັນນະຄະດີລາວ 1, ສາຍສ້າງຄູມັດທະຍົມ, ລະບົບ 11+3, ປີທີ 2 ກົມສ້າງຄູ, ກະຊວງສຶກສາທິການ.* ນະຄອນຫຼວງວຽງຈັນ ໂຮງພິມສຶກສາ.

ພອນສິຣິ ອຸໄທວັນ ພ້ອມຄະນະ. (2016*). ປຶ້ມພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 6 ເອກະສານ ການຮຽນການສອນ, ກະຊວງສຶກສາທິການ ແລະ ກິລາ*, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ນະຄອນຫຼວງວຽງຈັນໂຮງພິມສຶກສາ.

ພອນສິຣິ ອຸໄທວັນ ພ້ອມຄະນະ. (2023). *ປຶ້ມພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 5 ເອກະສານ ການຮຽນການສອນ, ກະຊວງສຶກສາທິການ ແລະ ກິລາ*, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ນະຄອນຫຼວງວຽງຈັນໂຮງພິມສຶກສາ.

ກິຫຼ້ອງ ໄຊຍະສານ ພ້ອມຄະນະ. (2023). *ຄູ່ມືການຂຽນລາຍງານຈົບຊັ້ນ (ວິໄຈ) ລະດັບປະລິນຍາຕີຕໍ່ເນື້ອງ ລະບົບ 11+3+4 ຫຼື 11+2+4 ວິທະຍາໄລຄູສະຫວັນນະເຂດ.*

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.138

*ພາກເພີ່ມເຕີມ*

| ຂໍ້ທີ | ລະດັບການປະຕິບັດ/ພຶດຕິກຳ | ປັດໄຈທີ່ເປັນຈິງ<br>ຫຼາຍທີ່ສຸດ ໜ້ອຍສຸດ | | | | |
|---|---|---|---|---|---|---|
| | | **5** | **4** | **3** | **2** | **1** |
| **I.** | **ປັດໄຈທົ່ວໄປທີ່ມີຕໍ່ນັກຮຽນ ແລະ ຄູສອນ (ການອ່ານ)** | | | | | |
| 1 | ການຊຸກຍູ້ສົ່ງເສີມການຮຽນການສອນການອ່ານ ຈາກພາກສ່ວນກ່ຽວຂ້ອງຂອງສັງຄົມ ຍັງບໍ່ທັນເພິ່ງພໍໃຈ. | 10 | 8 | 2 | | |
| 2 | ມັດທະຍົມສົມບູນສາທິດ ວິທະຍາໄລຄູສະຫວັນນະເຂດ ມີຫ້ອງສະໝຸດ, ຫ້ອງອ່ານ, ພາກສ່ວນກ່ຽວຂ້ອງ ສະໜອງປຶ້ມໃຫ້ອ່ານຮັບໃຊ້ການຮຽນການສອນ. | | 8 | 7 | 5 | |
| 3 | ຈາກດ້ານເສດຖະກິດ-ສັງຄົມ | | 15 | 5 | | |
| 4 | ການໃຫ້ຄວາມອົບອຸ່ນ ການຊຸກຍູ້ສະໜັບສະໜູນ ຕິດຕາມຈາກຜູ້ປົກຄອງຕໍ່ການຄົ້ນຄວ້າຮໍ່າຮຽນຂອງລູກຫຼານນັກຮຽນ. | 19 | 1 | | | |
| 5 | ຈາກດ້ານຫຼັກສູດການຮຽນການສອນຂອງແຕ່ຊັ້ນ, ຂັ້ນຮຽນຕ່າງໆ | | 16 | 4 | | |
| 6 | ສະພາບແວດລ້ອມກະທົບຕໍ່ການຮຽນການສອນການອ່ານ (ສິ່ງຫຍໍ້ທໍ້ຕ່າງໆ ເຊັ່ນ: ເກມ, ໂທລະສັບ, ຫຼິ້ນ, ໝູ່ເພື່ອນ, ສິ່ງເສບຕິດ...) | 20 | | | | |
| 7 | ການຮຽນການສອນ (ການອ່ານ) ຕ້ອງມີການຈັດແຂ່ງຂັນ ກິດຈະກຳ ການອ່ານ ຊຸມຊົນ ປະຈຳພາກຮຽນ, ປະຈຳປີ ແລະ ງານສຳຄັນຕ່າງໆ | 6 | 13 | 1 | | |
| **II.** | **ປັດໄຈຕໍ່ນັກຮຽນ (ການອ່ານ)** | | | | | |
| 8 | ນັກຮຽນຂາດຄວາມຮູ້ພື້ນຖານມາແຕ່ຊັ້ນອະນຸບານ, ປະຖົມສຶກສາ | 19 | 1 | | | |
| 9 | ດ້ານສຸຂະພາບຂອງນັກຮຽນ (ຄວາມຮັບຮູ້, ພິການ, ເດັກພິເສດ...) | | 2 | 18 | | |
| 10 | ນັກຮຽນບໍ່ມັກການອ່ານ (ບົດຮຽນ, ບົດເລື່ອງ, ນິທານ, ໜັງສືພິມ,...) | 17 | 3 | | | |
| 11 | ຈາກການຮັບຄວາມຮູ້ຈາກຄູສອນມາແຕ່ລະຊັ້ນ ແຕ່ລະຂັ້ນຮຽນ (ມາຮຽນບໍ່ປົກກະຕິ) | | 14 | 6 | | |
| 12 | ຈາກການຕິດຫຼິ້ນຂອງນັກຮຽນ (ເກມ, ໂທລະສັບ, ໝູ່ເພື່ອນບໍ່ດີ...) | 20 | | | | |
| 13 | ການຮຽນການສອນອ່ານ ນັກຮຽນມີເວລາບໍ່ພຽງພໍໃນການຝຶກທັກສະການອ່ານ | 2 | 17 | 1 | | |
| **III.** | **ປັດໄຈຕໍ່ຄູສອນ (ການອ່ານ)** | | | | | |
| 14 | ການຮຽນການສອນອ່ານຄູສອນຕ້ອງສ້າງກິດຈະກຳໃຫ້ຫຼາກຫຼາຍ. | 18 | 2 | | | |
| 15 | ການຮຽນການສອນອ່ານ ຄູສອນຕ້ອງແນະນຳເວລາອ່ານໃຫ້ເໝາະສົມແກ່ນັກຮຽນ. | 3 | 8 | 9 | | |
| 16 | ການຮຽນການສອນອ່ານ ຄູສອນຕ້ອງໄດ້ຍົກລະດັບວິຊາສະເພາະ, ຝຶກອົບຮົມ ວິທີການໃໝ່ ທັນກັບການສຶກສາໃນໄລຍະໃໝ່. | 19 | 1 | | | |
| 17 | ການຮຽນການສອນອ່ານ ຄູສອນຕ້ອງເສີມທັກສະການອ່ານໃຫ້ນັກຮຽນ (ທັກສະຕົວອັກສອນ, ການອອກສຽງ, ຄຳສັບ, ການອ່ານຫຼັງຮຽນໄຫຼ ແລະ ຄວາມເຂົ້າໃຈການອ່ານ). | 19 | 1 | | | |
| 18 | ການຮຽນການສອນອ່ານ ຄູສອນຕ້ອງໃຫ້ນັກຮຽນອ່ານຝຶກທັກສະ ພຽງພໍເວລາສອນ. | 15 | 4 | 1 | | |
| 19 | ການຮຽນການສອນອ່ານ ຄູສອນຕ້ອງທົບທວນພາກທິດສະດີການອ່ານກ່ອນສອນ. | 15 | 5 | | | |
| 20 | ການຮຽນການສອນອ່ານ ຄູສອນຕ້ອງສ້າງໃຫ້ນັກຮຽນມີຄວາມມັກ ຮັກການອ່ານພາສາລາວ ຕຳລາຕ່າງໆ ເປັນຕົ້ນແມ່ນລາຍພາສາລາວ ວັນນະຄະດີ. | 18 | 2 | | | |
| 21 | ການຮຽນການສອນອ່ານ ຄູສອນຕ້ອງມີການແລກປ່ຽນຖອດຖອນບົດຮຽນພາຍໃນ, ນຳຜູ້ຊ່ຽວຊານ ແລະ ສະຖາບັນອື່ນ. | 19 | 1 | | | |